**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

849

ແຂວງບໍລິຄໍາໄຊ

ເລກທີ.........../ຂບຊ

ທີ່ ບໍລິຄໍາໄຊ, ວັນທີ........... 09 NOV 2017

# ຂໍ້ຕົກລົງ

## ຂອງທ່ານ ເຈົ້າແຂວງບໍລິຄໍາໄຊ

## ວ່າດ້ວຍ ການກໍານົດລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ໂຄງການສາຍສົ່ງ 115 ກວ ຈາກເຂື່ອນໄຟຟ້ານໍ້າງຽບ1-ສະຖານີເມືອງປາກຊັນ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ ລົງວັນທີ 14 ທັນວາ 2015.
- ອີງຕາມ ດໍາລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ, ສະບັບເລກທີ 84/ລບ, ລົງວັນທີ 05 ເມສາ 2016.

## ເຈົ້າແຂວງບໍລິຄໍາໄຊ ອອກຂໍ້ຕົກລົງ:

**<u>ມາດຕາ 1</u>: ຈຸດປະສົງ ແລະ ຂອບເຂດການນໍາໃຊ້.**

ເຫັນດີໃຫ້ນໍາໃຊ້ລາຄາຫົວໜ່ວຍການຊົດເຊີຍຂ້າງລຸ່ມນີ້ ນໍາມາຈັດຕັ້ງປະຕິບັດການທົດແທນຕໍ່ບັນດາຊັບສິນຂອງສ່ວນບຸກຄົນ ແລະ ຊຸມຊົນ ທີ່ໄດ້ຮັບຜົນກະທົບຈາກການກໍ່ສ້າງຂອງໂຄງການສາຍສົ່ງ 115 ກວ ຈາກເຂື່ອນໄຟຟ້ານໍ້າງຽບ1 - ສະຖານີເມືອງປາກຊັນ ໃນຂອບເຂດສອງເມືອງຄື: ເມືອງ ປາກຊັນ ປະກອບມີ 5 ບ້ານ: ບ. ນໍ້າງຽບ, ບ. ຫ້ວຍສຽດ, ບ. ສະນະໄຊ, ບ. ອານຸສອນໄຊ ແລະ ບ. ທົ່ງນ້ອຍ. ເມືອງ ບໍລິຄັນ ປະກອບມີ 2 ບ້ານ: ບ. ຊຶມຊື່ນ, ບ. ນໍ້າປາ ແລະ ໃນຂອບເຂດບ້ານໃກ້ຄຽງຂອງເມືອງ ປາກຊັນ, ບໍລິຄັນ ແຂວງ ບໍລິຄໍາໄຊ ເອກະສານສະບັບນີ້ໄດ້ລະບຸລາຍລະອຽດກ່ຽວກັບລາຄາຫົວໜ່ວຍການຊົດເຊີຍຊັບສິນປະເພດຕ່າງໆດັ່ງຕໍ່ໄປນີ້:

1. ໝວດທີ 1 ຫົວໜ່ວຍລາຄາທົດແທນທີ່ດິນ
2. ໝວດທີ 2 ຫົວໜ່ວຍລາຄາທົດແທນຕົ້ນໄມ້
3. ໝວດທີ 3 ຫົວໜ່ວຍລາຄາທົດແທນສໍາລັບປ່າຊ້າ
4. ໝວດທີ 4 ຫົວໜ່ວຍລາຄາທົດແທນແຮງງານສໍາລັບການປົວແປງ.

**<u>ມາດຕາ 2</u> ຫົວໜ່ວຍລາຄາການທົດແທນ.**

ລາຄາຫົວໜ່ວຍທົດແທນສັບສິນແຕ່ລະປະເພດປະກອບມີ 4 ໝວດຄື:

**ໝວດທີ 1 ຫົວໜ່ວຍລາຄາທົດແທນທີ່ດິນ ແລະຄໍາອະທິບາຍກ່ຽວກັບປະເພດດິນ.**

ລາຄາຫົວໜ່ວຍທົດແທນທີ່ດິນ ທີ່ຖືກຜົນກະທົບ ຈາກຕົ້ນເສົາ ການຄິດໄລ່ແມ່ນໄດ້ຖືເອົາສະມັດຕະພາບ ແລະ ລາຄາ ເຂົ້າໃນທ້ອງຕະຫຼາດເປັນຫຼັກ, ໂດຍໄດ້ກໍານົດດັ່ງນີ້:

| ລ/ດ | ປະເພດດິນ | ຫົວໜ່ວຍ | ລາຄາ ( ກີບ ) | ໝາຍເຫດ |
|---|---|---|---|---|

| | | | | |
|---|---|---|---|---|
| 1 | ດິນນາເຟືອງ | 1 ມ$^2$ | 5,000 | 3ໂຕນ/ຮຕ |
| 2 | ດິນສວນ | 1 ມ$^2$ | 2,500 | ຄິດໄລ່ ½ ຂອງມູນຄ່າດິນນາ |
| 3 | ດິນໄຮ່ | 1 ມ$^2$ | 2,000 | |
| 4 | ດິນຄັງສັດ | 1 ມ$^2$ | 2,000 | |
| 5 | ດິນນາເຮື້ອ | 1 ມ$^2$ | 2,000 | |
| 6 | ດິນປ່າເລົ່າ | 1 ມ$^2$ | 2,000 | |

**<u>ໝາຍເຫດ</u>**

- ສຳລັບດິນທີ່ຢູ່ກ້ອງແລວສາຍສົ່ງຍັງສາມາດນຳໃຊ້ເຂົ້າໃນການຜະລິດ ປູກພືດທີ່ມີຄວາມສູງບໍ່ເກີນ 3 ແມັດ.
- ສຳລັບດິນທີ່ເປັນການສຳປະທານ ຈາກລັດແມ່ນຈະບໍ່ໄດ້ຮັບການທົດແທນ.
- ດິນນາເຟືອງ ແມ່ນເປັນພື້ນທີ່ມີການບຸກເບີກດ້ວຍແຮງງານຄົນ ຫຼື ກົນຈັກມາກ່ອນ, ໄດ້ຕີເປັນຄັນປ້ານເປັນຄູ ເຮັດເປັນໄຮ່ນາ ເພື່ອເກັບກັກນ້ຳ ແລະ ນຳໃຊ້ໃນການກະສິກຳ ເຊັ່ນວ່າ: ການປູກເຂົ້ານາປີ ຫຼື ພືດຊະນິດອື່ນໆ ໃນລະດູຝົນແບບຕໍ່ເນື່ອງ.
- ດິນສວນ ແມ່ນດິນທີ່ມີການປູກເບີກ ແລະ ທຳການຜະລິດ, ອາດຈະເປັນການປູກພືດໄລຍະສັ້ນ ແລະ ໄລຍະຍາວ ແລະ ມີການບົວລະບັດມາຢ່າງຕໍ່ເນື່ອງ.
- ດິນໄຮ່ ແມ່ນດິນທີ່ຜ່ານການບຸກເບີກເປັນໄຮ່ມາກ່ອນ.
- ດິນຄັງສັດ ແມ່ນດິນທີ່ມີຂອບເຂດຢ່າງຈະແຈ້ງ ມີຮົ້ວອ້ອມເປັນບ່ອນເປັນຈຸດ (ບ່ອນທີ່ມີເງື່ອນໄຂອຳນວຍ) ເພື່ອລ້ຽງສັດໄວ້ບໍລິເວນດັ່ງກ່າວ ເຊິ່ງອາດມີສັດລ້ຽງຢູ່ໃນລະດູທຳການຜະລິດ.
- ນາເຮື້ອ ແມ່ນເປັນພື້ນທີ່ ທີ່ຜ່ານການບຸກເບີກດ້ວຍແຮງງານຄົນ ຫຼື ກົນຈັກ ມີຄັນນາ, ມີໄຮ່ນາ ແລະ ເຄີຍໃຊ້ໃນການປູກເຂົ້າ ແຕ່ບໍ່ໄດ້ທຳການຜະລິດ ຕິດຕໍ່ກັນເປັນໄລຍະ 3 ປີ ຂຶ້ນໄປ.

**ໝວດທີ 2 ຫົວໜ່ວຍລາຄາທົດແທນຕົ້ນໄມ້**

1. **ຕົ້ນໄມ້ອຸດສາຫະກຳ.**

| ລ/ດ | ຊະນິດໄມ້ | ປູກໃຫມ່ | ໜ້າຕາງ 1-5 ຊມ | ໜ້າຕາງ 6-7 ຊມ | ໜ້າຕາງ 8-9 ຊມ | ໜ້າຕາງ 10-15 ຊມ | ໜ້າຕາງ 15-20 ຊມ | ໝາຍເຫດ |
|---|---|---|---|---|---|---|---|---|
| 1 | ຕົ້ນໄມ້ອີກ | 4,700 | 7,700 | 10,700 | 13,700 | 16,700 | 22,700 | |
| 2 | ຕົ້ນໄມ້ດູ່ | 9,000 | 12,000 | 15,000 | 18,000 | 21,000 | 24,000 | |
| 3 | ຕົ້ນໄມ້ສັກ | 9,000 | 12,000 | 15,000 | 18,000 | 21,000 | 24,000 | |

**<u>ໝາຍເຫດ</u>**:

- ຖ້າໜ້າຕາງໃຫຍ່ກວ່າ 20 ຊມ ຂຶ້ນໄປລາຄາທົດແທນແມ່ນອີງຕາມການຕົກລົງເຮັດດີຈາກຄະນະກຳມະການ.

2. **ຕົ້ນໄມ້ອຸດສາຫະກຳ.**

| ລ/ດ | ຊະນິດໄມ້ | ອາຍຸ 1ປີ | ອາຍຸ 2 ປີ | ອາຍຸ 3 ປີ | ອາຍຸ 4 ປີ | ອາຍຸ 5 ປີ | ອາຍຸ≥6ປີ ຂຶ້ນໄປ | ໝາຍເຫດ |
|---|---|---|---|---|---|---|---|---|

| | | | | | | | | |
|---|---|---|---|---|---|---|---|---|
| 1 | ຕົ້ນເກດສະໜາ | 7,000 | 10,000 | 13,000 | 16,000 | 19,000 | 22,000 | |
| 2 | ຢາງພາລາ | 14,000 | 17,000 | 20,000 | 23,000 | 26,000 | 60,000 | |

**ໝາຍເຫດ:**

- ຕົ້ນໄມ້ທີ່ເກີດຂຶ້ນຕາມທຳມະຊາດທີ່ບໍ່ໄດ້ມີການຄຸ້ມຄອງ ແລະ ບົວລະບັດຮັກສາແມ່ນບໍ່ໄດ້ທົດແທນ.
- ຖ້າໜ້າຕາງໃຫຍ່ກວ່າ 20 ຊມ ຂຶ້ນໄປລາຄາທົດແທນແມ່ນອີງຕາມການຕົກລົງເຮັດດີຈາກຄະນະກຳມະການ.

**3. ຕົ້ນໄມ້ກະສິກຳ ( ຕົ້ນໄມ້ໃຫ້ໝາກ ).**

| ລ/ດ | ຊະນິດຕົ້ນໄມ້ | ມູນຄ່າທົດແທນ (ຈຳນວນປີທີ່ໃຫ້ຜົນຜະລິດ) ຕົ້ນ/ກີບ/ປີ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | 1 | 2 | 3 | 4 | 5 | >=6 | |
| 1 | ຕົ້ນມ່ວງ | 71,000 | 101,000 | 131,000 | 161,000 | 191,000 | 221,000 | |
| 2 | ຕົ້ນໝາກຂາມ | 71,000 | 101,000 | 131,000 | 161,000 | 191,000 | 221,000 | |
| 3 | ຕົ້ນໝາກນາວ | 61,000 | 91,000 | 121,000 | 151,000 | 181,000 | 211,000 | |
| 4 | ຕົ້ນພ້າວ | 141,000 | 241,000 | 341,000 | 441,000 | 541,000 | 641,000 | |
| 5 | ຕົ້ນງິ້ວ | 58,000 | 88,000 | 118,000 | 148,000 | 178,000 | 208,000 | |
| 6 | ຕົ້ນສີດາ | 71,000 | 101,000 | 131,000 | 161,000 | 191,000 | 221,000 | |
| 7 | ຕົ້ນລຳໄຍ | 71,000 | 101,000 | 131,000 | 161,000 | 191,000 | 221,000 | |
| 8 | ຕົ້ນມີ້ | 66,000 | 96,000 | 126,000 | 156,000 | 186,000 | 216,000 | |

ໝາຍເຫດ:

- ຕົ້ນໄມ້ທີ່ຍັງບໍ່ໃຫ້ຜົນຜະລິດ ແມ່ນໃຫ້ຄິດໄລ່ຄືກັນກັບຕົ້ນໄມ້ອຸດສາຫະກຳ.

**4. ຫຼັກການການຄິດໄລ່ລາຄາຫົວໜ່ວຍທົດແທນສຳລັບຕົ້ນໄມ້ໃຫ້ລຳ/ໄມ້ປ້ອງ.**

| ລ/ດ | ລາຍການປະເພດໄມ້ | ມູນຄ່າທົດແທນສຸ່ມນ້ອຍ/ກີບ<br>ແຕ່ 4ຕົ້ນລົງມາ | ມູນຄ່າທົດແທນສຸ່ມໃຫຍ່/ກີບ<br>ແຕ່ 5ຕົ້ນຂຶ້ນເມືອ | ໝາຍເຫດ |
|---|---|---|---|---|
| 1 | ອ້ອຍ | 10,000 | 50,000 | |
| 2 | ໄມ້ໄຜ່ບ້ານ | 50,000 | 185,000 | |
| 3 | ໄມ້ຊາງໄພ | 30,000 | 50,000 | |
| 4 | ຫວາຍ, ແຍ້ | 20,000 | 40,000 | |

**ໝາຍເຫດ:**

- ຖ້າພືດຊະນິດໃດບໍ່ໄດ້ກຳນົດໃນລາຄາຫົວໜ່ວຍແມ່ນໃຫ້ອີງໃສ່ລາຄາພືດທີ່ໃກ້ຄຽງ.

**5. ຫຼັກການການຄິດໄລ່ລາຄາຫົວໜ່ວຍທົດແທນສຳລັບພືດປະເພດຫາດແປ້ງ.**

ການຄິດໄລ່ແມ່ນ ໄດ້ກຳນົດເອົາລາຄາຂອງພືດຕໍ່ຈຳນວນນ້ຳໜັກເປັນກິໂລ ດັ່ງລຸ່ມນີ້:

| ລ/ດ | ລາຍການປະເພດພືດທາດແປ້ງ | ລາຄາຫົວໜ່ວຍ (ກີບ/ກິໂລ) | ໝາຍເຫດ |
|---|---|---|---|
| 1 | ມັນຕົ້ນ | 500 | |

**6. ລາຄາຫົວໜ່ວຍທົດແທນສໍາລັບພືດປະເພດຫົວ/ໝາກ/ເຄືອ.**

| ລ/ດ | ລາຍການປະເພດຫົວ ແລະ ໝາກ | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|
| 1 | ກ້ວຍ (ສຸມໃຫຍ່) | ສຸມ | 40,000 | ແຕ່ 5 ຕົ້ນຂຶ້ນໄປ |
| 2 | ກ້ວຍ (ສຸມນ້ອຍ) | ສຸມ | 30,000 | ແຕ່ 4 ຕົ້ນລົງມາ |
| 3 | ໝາກນັດ | ສຸມ | 3,000 | |

**ໝວດທີ 3 ຫົວໜ່ວຍລາຄາທົດແທນສໍາລັບປ່າຊ້າ**

ສໍາລັບຍ້າຍປ່າຊ້າ ແລະ ຍ້າຍທໍຜີທີ່ຖືຕົນເສົາ ແລະ ແລວສາຍຜ່ານການຄິດໄລ່ມູນຄ່າທົດແທນແມ່ນອີງໃສ່ມູນ ຄ່າສໍາລັບເຮັດພິທີຂອບໄຂ່ຕາມຮີດຄອງປະເພດນີ ແລະ ກໍານົດເປັນແຫ່ງຊຶ່ງໄດ້ກໍານົດດັ່ງນີ້:

| ລ/ດ | ລາຍການ | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|
| 1 | ປ່າຊ້າ | 1 ແຫ່ງ | 500,000 | ຊ່ວຍແປງຮີດຄອງ |

**ໝວດທີ 4 ຫົວໜ່ວຍລາຄາທົດແທນແຮງງານສໍາລັບການປັບແປງ.**

| ລ/ດ | ລາຍການ | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|
| 1 | ແຮງງານປັບແປງຄັນນາ | 1 ມ | 8,000 | ແມັດຍາວ |
| 2 | ແຮງງານປັບແປງຮົ້ວ | 1 ມ | 8,000 | ແມັດຍາວ |

**<u>ມາດຕາ 03:</u>** ມອບໃຫ້ຄະນະກໍາມະການປະສານງານ ແລະ ຊຸກຍູ້ໂຄງການ, ອະນຸກໍາມະການ, ໂຄງການສາຍສົ່ງ 115 ກວ ນໍ້າງຽບ1-ປາກຊັນ, ພະແນກການທີ່ກ່ຽວຂ້ອງຂັ້ນເມືອງ, ຂັ້ນບ້ານ, ລັດວິສາຫະກິດໄຟຟ້າລາວ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**<u>ມາດຕາ 04:</u>** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງບໍລິຄໍາໄຊ**

ເຈົ້າແຂວງ

ປອ. ກອງແກ້ວ ໄຊສົງຄາມ